ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

# ຄູ່ມື
# ການຂໍອະນຸຍາດສ້າງຕັ້ງໂຮງຮຽນເອກະຊົນ ແລະ ເອກະຊົນນານາຊາດສາຍສາມັນສຶກສາ

ກົມມັດທະຍົມສຶກສາ

2016

# ຂັ້ນຕອນທີ 1.
# ການອະນຸມັດນຳໃຊ້ຫຼັກສູດ

## 1. ການດຳເນີນຂໍອະນຸມັດນຳໃຊ້ຫຼັກສູດ

**ການດຳເນີນຂໍອະນຸມັດນຳໃຊ້ຫຼັກສູດ ປະຕິບັດດັ່ງນີ້:**

1) ປະກອບຄຳຮ້ອງຂໍອະນຸຍາດນຳໃຊ້ຫຼັກສູດ;
2) ປະກອບຫຼັກສູດຕ່າງປະເທດທີ່ຈະນຳໃຊ້ເຂົ້າໃນການຈັດການຮຽນ - ການສອນ, ພ້ອມ ຫຼັກສູດ ວິຊາພາສາລາວ-ວັນນະຄະດີ ແລະ ປະຫວັດສາດລາວ ຈຳນວນ 2 ຊຸດ; ສຳລັບກະຊວງສຶກສາທິການ ແລະ ກິລາ ແລະ 2 ຊຸດ; ສຳລັບຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ.
3) ລາຍລະອຽດຂອງຫຼັກສູດຕ່າງປະເທດ.

   ລາຍລະອຽດຂອງຫຼັກສູດ ຕາມຫົວຂໍ້ຕໍ່ໄປນີ້:

   1. ຫຼັກການ/ປັດຊະຍາ/ໃຈຄວາມ;
   2. ຈຸດປະສົງຂອງຫຼັກສູດ;
   3. ລາຍລະອຽດກ່ຽວກັບຫຼັກສູດ;
   4. ເປັນຫຼັກສູດຂອງປະເທດໃດ;
   5. ໂຄງສ້າງຫຼັກສູດ (ກຳນົດວິຊາບັງຄັບ ແລະ ວິຊາເລືອກໃຫ້ຊັດເຈນໂດຍກຳນົດວິຊາຕ່າງໆ ເປັນຈຳນວນຊົ່ວໂມງ/ໜ່ວຍກິດ/ພາກຮຽນ/ອາທິດ).
   6. ເວລາຮຽນ;
      - ຫຼັກສູດທັງໝົດໃຊ້ເວລາຮຽນ .................................. ປີ;
      - ສົກຮຽນໜຶ່ງ ມີ ........... ພາກຮຽນ (......... ອາທິດ ຫຼື .......... ວັນ);
      - ພາກຮຽນໜຶ່ງ ມີ ................ ວັນ;
      - ອາທິດໜຶ່ງ ມີ ................... ວັນ; ວັນໜຶ່ງມີ ............... ຄາບຮຽນ;
   7. ການປະເມີນຜົນການຮຽນ;
   8. ເງື່ອນໄຂ, ເກນການສອບເສັງເລື່ອນຊັ້ນ ແລະ ຈົບຫຼັກສູດ.

4) ການຈັດການຮຽນ-ການສອນສອງພາສາ

   ໃຫ້ຜູ້ຂໍອະນຸຍາດແປຫຼັກສູດແຫ່ງຊາດໃນ 4 ວິຊາ ຄື: ຄະນິດສາດ, ຟີຊິກສາດ, ເຄມີສາດ ແລະ ຊີວະວິທະຍາ ເປັນພາສາຕ່າງປະເທດ ຕ້ອງໄດ້ຮັບຮອງ ຈາກກະຊວງສຶກສາທິການ ແລະ ກິລາ.(ຕໍ່ໜ້າມອບໃຫ້ກະຊວງສຶກສາທິການ ແລະ ກິລາ ແປໃຫ້ເປັນເອກະພາບກັນ)

## 2. ຂັ້ນຕອນຍື່ນຜ່ານເອກະສານ

2.1 ສໍາລັບໂຮງຮຽນເອກະຊົນນານາຊາດ

ຍື່ນເອກະສານຫາຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອສະເໜີຫາ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລະ ຫ້ອງການສະພາທີ່ເປີກສາພາກເອກະຊົນ ແລ້ວນໍາສະເໜີເຖິງ ກົມອະນຸບານ ແລະ ປະຖົມສຶກສາ ຫຼື ກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອພິຈາລະນາອານຸມັດ ແລະ ຮັບຮອງໃຫ້ນໍາໃຊ້ຫຼັກສູດ.

2.2 ສໍາລັບໂຮງຮຽນເອກະຊົນທີ່ຈັດການຮຽນ-ການສອນ ສອງພາສາ

ຍື່ນເອກະສານໂດຍຜ່ານຫາຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລ້ວສະເໜີຫາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເພື່ອພິຈາລະນາອານຸມັດ ແລະ ຮັບຮອງໃຫ້ນໍາໃຊ້ຫຼັກສູດ.

# ຂັ້ນຕອນທີ 2
# ການຂໍອະນຸຍາດສ້າງຕັ້ງ ຫຼື ຂະຫຍາຍຊັ້ນຮຽນ ຫຼື ສາຂາໂຮງຮຽນ

ບຸກຄົນ ຫຼື ນິຕິບຸກຄົນມີຈຸດປະສົງຂໍສ້າງຕັ້ງ ຫຼື ຂະຫຍາຍຊັ້ນຮຽນ ຫຼື ສາຂາໂຮງຮຽນເອກະຊົນ/ເອກະຊົນນານາຊາດ ຕ້ອງໄດ້ຮັບການອະນຸມັດນໍາໃຊ້ຫຼັກສູດ ຈາກກະຊວງສຶກສາທິການ ແລະ ກິລາ ແລະ ປະກອບເອກະສານ ພ້ອມດ້ວຍຫຼັກຖານ ດັ່ງນີ້.

**1. ກໍລະນີບຸກຄົນ.**

1) ຄໍາຮ້ອງຂໍອະນຸຍາດສ້າງຕັ້ງ, ຂະຫຍາຍຊັ້ນຮຽນ ຫຼື ສາຂາໂຮງຮຽນ;
2) ບັດປະຈໍາຕົວປະຊາຊົນ ຫຼື ປື້ມສໍາມະໂນຄົວ ຫຼື ພັດສະປອດ ພ້ອມສໍາເນົາ;
3) ຫຼັກຖານການສໍາເລັດການສຶກສາ ພ້ອມສໍາເນົາ;
4) ຮູບຖ່າຍຂະໜາດ 4x6 ຊັງຕີແມັດ ຈໍານວນ 2 ໃບ;
5) ຫຼັກການ ແລະ ລະບຽບການກ່ຽວກັບການບໍລິຫານໂຮງຮຽນ;
6) ບົດວິພາກເສດຖະກິດກ່ຽວກັບກິດຈະການຂອງໂຮງຮຽນ;
7) ໃບຕາດິນ ສະບັບສໍາເນົາ ຫຼື ຫຼັກຖານອື່ນທີ່ສະແດງກໍາມະສິດ ຫຼື ສິດໃນການເປັນຜູ້ເຊົ່າ(ສັນຍາເຊົ່າ) ພ້ອມສິດການນໍາໃຊ້ ແລະ ການດໍາເນີນທຸລະກິດການສຶກສາ ບໍ່ຕໍ່າກ່ວາ 10 ປີ ພ້ອມສໍາເນົາ;
8) ໜັງສືຢັ້ງຢືນຮັບຮອງການກໍ່ສ້າງອາຄານ ຫຼື ການດັດແປງອາຄານ ຫຼື ການເຄື່ອນຍ້າຍອາຄານ ພ້ອມສໍາເນົາ;
   - ໃບອະນຸຍາດ ປ່ຽນແປງການໃຊ້ອາຄານທີ່ໃຊ້ສ້າງຕັ້ງໂຮງຮຽນ ໂດຍລະບຸໃຫ້ນໍາໃຊ້ອາຄານເພື່ອການສຶກສາ ຫຼື ໜັງສືກວດສອບ ແລະ ຮັບຮອງຄວາມໝັ້ນຄົງ ແລະ ໄດ້ມາດຕະຖານ ຈາກວິສະວະກອນການກໍ່ສ້າງຕາມກົດໝາຍ.

9) ລາຍການປຶ້ມຕຳລາ ແລະ ປຶ້ມອ່ານເສີມໃນຫ້ອງສະໝຸດໂຮງຮຽນ;

10) ລາຍຊື່ ແລະ ຫຼັກຖານ ຜູ້ອຳນວຍການໂຮງຮຽນ, ຜູ້ຈັດການ ແລະ ແຜນຮັບຄູສອນ ແລະ ບຸກຄະລາກອນທາງການສຶກສາ (ສະເພາະຜູ້ອຳນວຍການແລະ ຄູສອນຕ້ອງມີໃບຢັ້ງຢືນວິຊາຄູ);

11) ແຜນການສອນ, ການຈັດການຮຽນ-ການສອນ, ບັນຊີອຸປະກອນ ແລະ ສື່ການຮຽນການສອນຕ່າງໆ ທີ່ຈຳເປັນ ຕາມຂໍ້ກຳນົດ

12) ແຜນການຮັບຄູ ແລະ ນັກຮຽນ ທີ່ຂໍອະນຸຍາດເປີດການຮຽນ-ການສອນ;

13) ໜັງສືຢັ້ງຢືນການອະນຸມັດນຳໃຊ້ຫຼັກສູດຈາກກະຊວງສຶກສາທິການ ແລະ ກິລາ (ສະເພາະໂຮງຮຽນທີ່ຂໍສ້າງຕັ້ງໃໝ່)

## 2. ກໍລະນີນິຕິບຸກຄົນ.

1) ຄຳຮ້ອງຂໍອະນຸຍາດສ້າງຕັ້ງ ຫຼື ຂະຫຍາຍຊັ້ນຮຽນ ຫຼື ສາຂາໂຮງຮຽນ;

2) ໃບອະນຸຍາດການລົງທຶນຂອງນິຕິບຸກຄົນ ພ້ອມສຳເນົາ;

3) ບັນຊີລາຍຊື່ຜູ້ຖືຮຸ້ນ ສຳລັບນິຕິບຸກຄົນ ທີ່ເປັນບໍລິສັດຮຸ້ນສ່ວນຈຳກັດ ຫຼື ບໍລິສັດຈຳກັດ ພ້ອມສຳເນົາ;

4) ບັນຊີລາຍຊື່, ສັນຊາດຂອງຄະນະກຳມະການ ແລະ ສະມາຊິກທຸກຄົນ ສຳລັບນິຕິບຸກຄົນ ທີ່ເປັນມູນນິທິ, ສະມາຄົມ ຫຼື ສະຫະກອນ;

5) ໜັງສືມອບສິດຂອງຜູ້ປະກອບການໃຫ້ຜູ້ອື່ນບໍລິຫານແທນ;

6) ບັດປະຈຳຕົວປະຊາຊົນ ຫຼື ສຳມະໂນຄົວ ຫຼື ພັດສະປອດ ຂອງຜູ້ປະກອບການ ຫຼື ຜູ້ບໍລິຫານແທນ ພ້ອມສຳເນົາ;

7) ຫຼັກຖານການສຳເລັດການສຶກສາຂອງຜູ້ປະກອບການ ຫຼື ຜູ້ບໍລິຫານແທນພ້ອມສຳເນົາ;

8) ຫຼັກການ ແລະ ລະບຽບການກ່ຽວກັບການບໍລິຫານໂຮງຮຽນ;

9) ບົດວິພາກເສດຖະກິດກ່ຽວກັບກິດຈະການຂອງໂຮງຮຽນ;

10) ໃບຕາດິນ ສະບັບສຳເນົາ ຫຼື ຫຼັກຖານອື່ນທີ່ສະແດງກຳມະສິດ ຫຼື ສິດໃນການເປັນຜູ້ເຊົ່າ(ສັນຍາເຊົ່າ) ພ້ອມສິດການນຳໃຊ້ ແລະ ການດຳເນີນທຸລະກິດການສຶກສາ ບໍ່ຕໍ່າກ່ວາ 10 ປີ ພ້ອມສຳເນົາ;

11) ໜັງສືຢັ້ງຢືນຮັບຮອງການກໍ່ສ້າງອາຄານ, ການດັດແປງອາຄານ ຫຼື ການເຄື່ອນຍ້າຍອາຄານ ພ້ອມສຳເນົາ;

- ໃບອະນຸຍາດ ປ່ຽນແປງການໃຊ້ອາຄານທີ່ໃຊ້ສ້າງຕັ້ງ, ຂະຫຍາຍຊັ້ນຮຽນ ແລະ ສາຂາໂຮງຮຽນໂດຍລະບຸໃຫ້ນຳໃຊ້ອາຄານເພື່ອການສຶກສາ ຫຼື ໜັງສືກວດສອບ ແລະ ຮັບຮອງຄວາມໝັ້ນຄົງ ແລະ ໄດ້ມາດຕະຖານ ຈາກວິສະວະກອນການກໍ່ສ້າງຕາມກົດໝາຍ.

12) ລາຍການປຶ້ມຕຳລາ ແລະ ປຶ້ມອ່ານເສີມໃນຫ້ອງສະໝຸດໂຮງຮຽນ;

13) ລາຍຊື່ ແລະ ຫຼັກຖານ ຜູ້ອຳນວຍການໂຮງຮຽນ, ຜູ້ຈັດການ ແລະ ແຜນຮັບຄູສອນ, ບຸກຄະລາກອນທາງການສຶກສາ (ສະເພາະຜູ້ອຳນວຍການ, ຄູສອນຕ້ອງມີໃບຢັ້ງຢືນວິຊາຄູ);

14) ແຜນການສອນ, ການຈັດການຮຽນ-ການສອນ, ບັນຊີອຸປະກອນ, ສື່ການຮຽນ-ການສອນຕ່າງໆ ທີ່ຈຳເປັນຕາມຂໍ້ກຳນົດ

15) ແຜນການຮັບນັກຮຽນ-ຄູ ທີ່ຂໍອະນຸຍາດເປີດການຮຽນ-ການສອນ;

16) ໜັງສືຢັ້ງຢືນການອະນຸມັດນຳໃຊ້ຫຼັກສູດ ຈາກກະຊວງສຶກສາທິການ ແລະ ກິລາ (ສະເພາະໂຮງຮຽນທີ່ຂໍສ້າງຕັ້ງໃໝ່)

## 3. ຂັ້ນຕອນຍື່ນຜ່ານເອກະສານ.

3.1 ສຳລັບໂຮງຮຽນເອກະຊົນນານາຊາດ

ຍື່ນເອກະສານຫາຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອສະເໜີຜ່ານພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລະ ຫ້ອງການສະພາທີ່ປຶກສາພາກເອະຊົນ ແລ້ວນຳສະເໜີຫາ ກົມອະນຸບານ ແລະ ປະຖົມສຶກສາ ຫຼື ກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອພິຈາລະນາອານຸຍາດສ້າງຕັ້ງ ຫຼື ຂະຫຍາຍຊັ້ນຮຽນ ຫຼື ສາຂາໂຮງຮຽນ

3.2 ສຳລັບໂຮງຮຽນເອກະຊົນ

ຍື່ນເອກະສານຫາຫ້ອງການສຶກສາທິການ ແລະ ກິລາເມືອງ ແລ້ວນຳສະເໜີ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເພື່ອພິຈາລະນາອານຸຍາດສ້າງຕັ້ງ ຫຼື ຂະຫຍາຍຊັ້ນຮຽນ ຫຼື ສາຂາໂຮງຮຽນ.

# ຂັ້ນຕອນທີ 3
# ການຂໍຕໍ່ ຫຼື ຂໍຍຸບເລີກກິດຈະການໂຮງຮຽນ

ຜູ້ໄດ້ຮັບໃບອະນຸຍາດມີຈຸດປະສົງຂໍຕໍ່ເວລາ ຫຼື ຂໍຍຸບເລີກການດຳເນີນກິດຈະການ ໂຮງຮຽນຕ້ອງປະກອບເອກະສານ ດັ່ງນີ້:

## 1. ການຂໍຕໍ່ເວລາດຳເນີນກິດຈະການໂຮງຮຽນ.

1) ຄຳຮ້ອງຂໍຕໍ່ເວລາດຳເນີນກິດຈະການໂຮງຮຽນເອກະຊົນ/ເອກະຊົນນານາຊາດ;

2) ບົດສະຫຼຸບໄລຍະດຳເນີນກິດຈະການຜ່ານມາ;

3) ບັດປະຈຳຕົວປະຊາຊົນ ຫຼື ປື້ມສຳມະໂນຄົວ ພ້ອມສຳເນົາ;

4) ຮູບຖ່າຍຂະໜາດ 4X6 ຊັງຕີແມັດ ຈຳນວນ 2 ໃບ;

5) ຫຼັກການ ແລະ ລະບຽບການກ່ຽວກັບການບໍລິຫານໂຮງຮຽນ;

6) ບົດວິພາກເສດຖະກິດກ່ຽວກັບກິດຈະການຂອງໂຮງຮຽນ;
7) ໜັງສືຢັ້ງຢືນຮັບຮອງການກໍ່ສ້າງອາຄານ, ການດັດແປງອາຄານ ຫຼື ການເຄື່ອນຍ້າຍອາຄານ ພ້ອມສຳເນົາ;
   - ໃບອະນຸຍາດປ່ຽນແປງການໃຊ້ອາຄານທີ່ໃຊ້ສ້າງຕັ້ງໂຮງຮຽນໂດຍລະບຸໃຫ້ນຳໃຊ້ອາຄານ ເພື່ອການສຶກສາ ຫຼື ໜັງສືກວດສອບ, ຮັບຮອງຄວາມໝັ້ນຄົງ ແລະ ໄດ້ມາດຕະຖານຈາກ ວິສະວະກອນການກໍ່ສ້າງຕາມກົດໝາຍ.
8) ລາຍການປຶ້ມຕຳລາ ແລະ ປຶ້ມອ່ານເສີມໃນຫ້ອງສະໝຸດໂຮງຮຽນ;
9) ລາຍຊື່ ແລະ ຫຼັກຖານ ຜູ້ອຳນວຍການໂຮງຮຽນ, ຜູ້ຈັດການ, ຄູສອນ ແລະ ບຸກຄະລາກອນ ທາງການສຶກສາ (ສະເພາະຜູ້ອຳນວຍການ ແລະ ຄູສອນຕ້ອງມີໃບຢັ້ງຢືນວິຊາຄູ);
10) ແຜນການສອນ, ການຈັດການຮຽນ-ການສອນ, ບັນຊີອຸປະກອນ ແລະ ສື່ການຮຽນ-ການ ສອນຕ່າງໆ ທີ່ຈຳເປັນ ຕາມຂໍ້ກຳນົດ;
11) ແຜນການຮັບຄູ ແລະ ນັກຮຽນທີ່ຂໍອະນຸຍາດເປີດການຮຽນ-ການສອນ;
12) ໜັງສືຢັ້ງຢືນຄຸນະພາບການສຶກສາຈາກອົງການຈັດຕັ້ງກ່ຽວຂ້ອງ (ສຳລັບໂຮງຮຽນນານາຊາດ)
13) ໜັງສືຢັ້ງຢືນການຮັບຮອງການປະເມີນຜົນການສອບເສັງ, ການອອກປະກາສະນິຍະບັດຈາກ ອົງການຈັດຕັ້ງທີ່ກ່ຽວຂ້ອງ (ສຳລັບໂຮງຮຽນນານາຊາດ).

## 2. ການຂໍຍຸບເລີກດຳເນີນກິດຈະການໂຮງຮຽນ.

1) ຄຳຮ້ອງການຂໍຍຸບເລີກກິດຈະການ ໂຮງຮຽນເອກະຊົນ/ເອກະຊົນນານາຊາດ;
2) ບົດສະຫຼຸບໄລຍະດຳເນີນກິດຈະການຜ່ານມາ ແລະ ເຫດຜົນການບຸບເລີກ;
3) ບົດວິພາກເສດຖະກິດກ່ຽວກັບກິດຈະການຂອງໂຮງຮຽນ;
4) ການໃຫ້ຍຸບເລີກການດຳເນີນກິດຈະການຂອງໂຮງຮຽນ, ໃນກໍລະນີຜູ້ຮັບອະນຸຍາດບໍ່ປະຕິ ບັດຕາມລະບຽບຫຼັກການທີ່ກຳນົດໄວ້ ອົງການຈັດຕັ້ງທີ່ກ່ຽວຂ້ອງມີສິດສັ່ງຍຸບເລີກ.(ໃຫ້ໃສ່ ມາດຕະການ)

## 3. ຂັ້ນຕອນຍື່ນຜ່ານເອກະສານ

3.1 ສຳລັບໂຮງຮຽນເອກະຊົນນານາຊາດ

ຍື່ນເອກະສານຫາຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອສະເໜີຜ່ານພະແນກ ສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລະ ຫ້ອງການສະພາທີ່ເປີກສາພາກເອະຊົນ ແລ້ວນຳສະເໜີຫາ ກົມອະນຸບານ ແລະ ປະຖົມສຶກສາ ຫຼື ກົມມັດທະຍົມສຶກສາ ກະຊວງສຶກ ສາທິການ ແລະ ກິລາ ເພື່ອພິຈາລະນາການຂໍຕໍ່ ຫຼື ຂໍຍຸບເລີກກິດຈະການໂຮງຮຽນ.

3.2 ສຳລັບໂຮງຮຽນເອກະຊົນ

ຍື່ນເອກະສານຫາຫ້ອງການສຶກສາທິການ ແລະ ກິລາເມືອງ ແລ້ວນຳສະເໜີ ພະແນກ ສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເພື່ອພິຈາລະນາອານຸຍາດການຂໍຕໍ່ ຫຼື ຂໍຍຸບ ເລີກກິດຈະການໂຮງຮຽນ.

## ຂັ້ນຕອນ 4
## ການຄົ້ນຄວ້າ ແລະ ພິຈາລະນາ

ການຄົ້ນຄວ້າ ແລະ ພິຈາລະນາອະນຸຍາດໃຫ້ສ້າງຕັ້ງໂຮງຮຽນ ຕ້ອງດຳເນີນການໃຫ້ສຳເລັດພາຍໃນ 03 ເດືອນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ເປັນຕົ້ນໄປ ຕາມຂັ້ນຕອນດັ່ງນີ້:

1. ບຸກຄົນ ຫຼື ນິຕິບຸກຄົນມີຈຸດປະສົງຂໍສ້າງຕັ້ງໂຮງຮຽນເອກະຊົນ/ເອກະຊົນນານາຊາດ ໃຫ້ຍື່ນຄຳຮ້ອງຂໍອະນຸຍາດສ້າງຕັ້ງໂຮງຮຽນ ພ້ອມເອກະສານປະກອບຄົບຖ້ວນກ່ອນມື້ເປີດສົກຮຽນ/ປີຮຽນ 06 ເດືອນ.
2. ສຳລັບໂຮງຮຽນເອກະຊົນນານາຊາດ

    ຍື່ນເອກະສານຫາຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອສະເໜີຂຶ້ນຜ່ານພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລະ ຫ້ອງການສະພາທີ່ເປັກສາພາກເອະຊົນ ແລ້ວນຳສະເໜີເຖິງກົມອະນຸບານ ແລະ ປະຖົມສຶກສາ ຫຼື ກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອພິຈາລະນາອານຸມັດ ແລະ ຮັບຮອງໃຫ້ນຳໃຊ້ຫຼັກສູດ.
3. ສຳລັບໂຮງຮຽນເອກະຊົນ

    ຍື່ນເອກະສານຫາຫ້ອງການສຶກສາທິການ ແລະ ກິລາເມືອງ ແລ້ວນຳສະເໜີ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເພື່ອພິຈາລະນາອານຸມັດ ແລະ ຮັບຮອງໃຫ້ນຳໃຊ້ຫຼັກສູດ.
4. ການຈັດຕັ້ງທີ່ກ່ຽວຂ້ອງມີໜ້າທີ່ຮັບຜິດຊອບໃນການກວດສອບປະຫວັດຂອງຜູ້ຂໍອະນຸຍາດສ້າງຕັ້ງໂຮງຮຽນ ພ້ອມທັງກວດກາຄວາມຖືກຕ້ອງຂອງເອກະສານປະກອບການພິຈາລະນາທັງໝົດ ຖ້າເອກະສານບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ແຈ້ງໃຫ້ຜູ້ຂໍອະນຸຍາດສ້າງຕັ້ງໂຮງຮຽນປະກອບເອກະສານຄືນ.
5. ການຈັດຕັ້ງທີ່ກ່ຽວຂ້ອງມີໜ້າທີ່ຮັບຜິດຊອບແຕ່ງຕັ້ງຄະນະ ລົງໄປປະເມີນຄວາມພ້ອມທາງດ້ານອາຄານ, ສະຖານທີ່ ແລະ ສິ່ງອານວຍຄວາມສະດວກທີ່ນຳໃຊ້ເຂົ້າໃນການຮຽນ-ການສອນຕາມທີ່ກຳນົດໄວ້ໃນຫຼັກການຄຸ້ມຄອງໂຮງຮຽນ ພາຍຫຼັງທີ່ລົງໄປປະເມີນໃຫ້ລາຍງານຜົນດັ່ງນີ້:
    1) ຖ້າຜົນການປະເມີນເຫັນວ່າ ຖືກຕ້ອງຄົບຖ້ວນຕາມເງື່ອນໄຂ ແລະ ລະບຽບການແມ່ນນຳສະເໜີຂັ້ນເທິງ ອະນຸຍາດສ້າງຕັ້ງໂຮງຮຽນ
    2) ຖ້າຜົນການປະເມີນເຫັນວ່າ ບໍ່ມີຄວາມພ້ອມດ້ານໃດດ້ານໜຶ່ງ ຫຼື ບໍ່ມີຄວາມເໝາະສົມໃຫ້ສະເໜີເຫດຜົນ ແລະ ເຮັດບົດບັນທຶກຮ່ວມກັນລະຫວ່າງຄະນະລົງປະເມີນ ແລະ ຜູ້ຂໍອະນຸຍາດສ້າງຕັ້ງ ແລະ ແຈ້ງໃຫ້ການຈັດຕັ້ງທີ່ຮັບຜິດຊອບທຸກຂັ້ນຮັບຊາບ;
    3) ຜູ້ຂໍອະນຸຍາດສ້າງຕັ້ງໂຮງຮຽນ ເມື່ອໄດ້ຮັບແຈ້ງຜົນການປະເມີນຈາກການຈັດຕັ້ງທີ່ຮັບຜິດຊອບ ຜູ້ຂໍອະນຸຍາດຕ້ອງປັບປຸງເງື່ອນໄຂຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນບົດບັນທຶກ

ໃຫ້ຄົບຖ້ວນແລ້ວນຳສະເໜີພິຈາລະນາຄືນໃໝ່ພາຍໃນ 02 ເດືອນ, ນັບແຕ່ວັນທີ່ໄດ້ຮັບແຈ້ງການ ຫຼື ຄຳສັ່ງ ຈາກຜູ້ອະນຸຍາດ.

## ຂັ້ນຕອນທີ 5
## ການຂໍອະນຸຍາດເປີດສົກຮຽນ/ປີຮຽນ

ຫຼັງຈາກໄດ້ຮັບອະນຸຍາດສ້າງຕັ້ງໂຮງຮຽນແລ້ວ ໃຫ້ປະຕິບັດດັ່ງນີ້:

1. ຈັດຕັ້ງໃຫ້ມີຄະນະກຳມະການບໍລິຫານໂຮງຮຽນ ຫຼື ສະພາໂຮງຮຽນ, ຄະນະອຳນວຍການໂຮງຮຽນ ພາຍໃນ 03 ເດືອນ ນັບແຕ່ວັນທີ່ໄດ້ຮັບ ອະນຸຍາດ.
2. ເປີດຮັບສະໝັກຄູສອນ ແລະ ບຸກຄະລາກອນການສຶກສາ ຕາມລະບຽບການ ພາຍໃນ 03 ເດືອນ ນັບແຕ່ວັນທີ່ໄດ້ຮັບອະນຸຍາດ.
3. ກ່ອນຈະດຳເນີນ ການຮຽນ-ການສອນ ໃຫ້ຜູ້ຮັບອະນຸຍາດເຮັດໜັງສືແຈ້ງໃຫ້ການຈັດຕັ້ງທີ່ຮັບຜິດຊອບທຸກຂັ້ນຮັບຊາບ ລ່ວງໜ້າ 01 ເດືອນ.